ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

Rights-LINK

# ເອົາໃຈເພິ່ນມາໃສ່ໃຈໂຕ



ຂຽນໂດຍ: ທ. ທອງວັນ ປັນຍາວົງ

*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*

http://www.rightslinklao.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

VILLAGE FOCUS INTERNATIONAL

ໂຄງການ ເຄືອຂ່າຍຂໍ້ມູນ ທີ່ດິນ

Rights-LINK


ບ້ານ ໂພນສະຫວັນໃຕ້, ໜ່ວຍ 14, ເຮືອນເລກທີ 207
ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 (0)21 312519
ແຟກ: +856 (0)21 315841


ອົງການບ້ານຈຸດສຸມສາກົນ (VFI)

ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)


ສະໜັບສະໜູນທຶນໂດຍ: ອົງການເພື່ອການພັດທະນາ ແລະ ການຮ່ວມມື
ແຫ່ງປະເທດສະວິດເຊີແລນ (SDC)

# ບົດນຳ

ປັດຈຸບັນບັນຫາເລື່ອງການນຳໃຊ້ຕອນດິນຕິດແປະກັນເປັນສາເຫດເຮັດໃຫ້ເຈົ້າຂອງດິນເກີດຄວາມບໍ່ເຂົ້າໃຈກັນລະຫວ່າງຄອບຄົວຕໍ່ຄອບຄົວ.ບັນຫາເກີດຂຶ້ນເປັນຍ້ອນການນຳໃຊ້ດິນທີ່ບໍ່ສອດຄ່ອງກັນ ຫລື ວ່າ ມີຜົນກະທົບຕໍ່ກັນໂດຍຜູ້ນຳໃຊ້ບໍ່ໄດ້ ປຶກສາຫາລືກັນ ແລະ ບໍ່ປຶກສາກັບຂະແໜງການທີ່ກ່ຽວຂ້ອງ ເຊັ່ນວ່າ: ຜັງເມືອງຂອງເມືອງ, ຜັງເມືອງຂອງນະຄອນຫຼວງ ແລະ ອພບ.

ຕາມການສັງເກດໂດຍລວມແລ້ວການນຳໃຊ້ດິນບໍ່ສອດຄ່ອງກັນມີຫຼາຍເຫດການທີ່ເກີດຂຶ້ນຄື: ການຖົມດິນ, ການສ້າງຄວາມເປິະເປື້ອນ ແລະ ສິ່ງລົບກວນໃຫ້ແກ່ຜູ້ອື່ນ. ສະນັ້ນ, ບໍ່ວ່າຈະເປັນຄອບຄົວ ຫລື ທຸລະກິດໃດກໍຕາມທີ່ປະກອບສ້າງເປັນກິດຈະການໃດໜຶ່ງ. ຕ້ອງໄດ້ຄຳນຶງເຖິງຕາໜ່າງເຕັກນິກທີ່ໃຊ້ປະຈຳວັນ. ຈຳເປັນຕ້ອງມີລະບົບປ້ອງກັນເປັນຢ່າງດີ, ເພື່ອບໍ່ໃຫ້ເກີດຜົນກະທົບຕາມມາສູ່ຕົນເອງ ແລະ ຜູ້ອື່ນ ໂດຍສະເພາະນ້ຳເສຍ, ກິ່ນອາຍ, ສິ່ງເສດ ເຫລືອ, ນ້ຳຝົນ, ສິ່ງປະດັບ, ສຽງລົບກວນ ແລະ ອື່ນໆ ຊຶ່ງຜູ້ຄົນສ່ວນຫລາຍບໍ່ສາມາດເບິ່ງເຫັນບັນຫາທີ່ຈະເກີດຂຶ້ນໄດ້.

ບັນຫາດັ່ງກ່າວນີ້, ມັນໄດ້ສະທ້ອນໃຫ້ເຫັນຊ່ອງຫວ່າງໃນການນຳໃຊ້ດິນສ້າງສິ່ງໃດໜຶ່ງໂດຍບໍ່ໄດ້ຄຳນຶງ ເຖິງຜົນກະທົບທີ່ຈະເກີດຂຶ້ນໃນຕໍ່ໜ້າອາດຈະເປັນມື້ໃດມື້ໜຶ່ງ ຫລື ຕໍ່ລູກຫລານຂອງພວກເຮົາ.

ກໍລະນີສຶກສານີ້ຈະນຳສະເໜີກ່ຽວກັບບັນຫາການບໍ່ປະຕິບັດກົດລະບຽບຂອງປະຊາຊົນທີ່ເຫັນຜົນປະໂຫຍດຕົນເອງຫລາຍເກີນໄປໂດຍບໍ່ຄຳນຶງເຖິງຈິດໃຈຄົນອ້ອມຂ້າງ ແລະ ບັນຫາທີ່ຂະແໜງການທີ່ກ່ຽວຂ້ອງຍັງບໍ່ເຂັ້ມງວດໃນການເຜີຍແຜ່ ແລະ ກວດກາໄດ້ດີເທົ່າທີ່ຄວນ.

# ສາລະບານ


| | |
|---|---|
| ບົດນຳ | III |
| ສາລະບານ | V |
| | |
| ປະຫວັດຄວາມເປັນມາ. | 1 |
| ບັນຫາທີ່ເກີດຂຶ້ນ. | 1 |
| ລະບຽບກົດໝາຍທີ່ກ່ຽວຂ້ອງ. | 4 |
| ການວິເຄາະບັນຫາ ແລະ ສິ່ງທີ່ເກີດຂຶ້ນ. | 5 |
| ສະຫຼຸບ. | 8 |
| ຂໍ້ສະເໜີ. | 8 |
| ຂໍ້ສັງເກດ. | 9 |

## 1. ປະຫວັດຄວາມເປັນມາ.

ນະຄອນຫລວງວຽງຈັນເປັນບ່ອນທີ່ມີປະຊາກອນໜາແໜ້ນທີ່ສຸດໃນປະເທດລາວ. ແຕ່ລະປີມີປະຊາກອນເພີ່ມຂຶ້ນຢ່າງໄວວາ, ດັ່ງນັ້ນ ນະຄອນຫລວງວຽງຈັນຈຶ່ງຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ໃນຫ້າປີຜ່ານມານີ້ມີນັກລົງທຶນຕ່າງປະເທດ, ນັກທຸລະກິດລາວ ແລະ ພໍ່ຄ້າຊາວຂາຍທີ່ຮັ່ງມີພາກັນກວ້ານຊື້ທີ່ດິນເຂດຕ່າງໆຢູ່ນະຄອນຫລວງວຽງຈັນ. ເພື່ອເຮັດເປັນໂຮງແຮມ, ເຮືອນພັກ, ຕຶກຫ້ອງເຊົ່າ, ຮ້ານອາຫານ ແລະ ຮ້ານຂາຍເຄື່ອງ.

ພວກເຮົາຢາກຍົກກໍລະນີທີ່ເກີດຂຶ້ນຢູ່ໃນບາງເຂດທີ່ກໍາລັງເປັນບັນຫາຢູ່ໃນປັດຈຸບັນ. ເຂດທີໜຶ່ງ ແມ່ນຢູ່ຄຸ້ມດົງປ່າລານທົ່ງ, ເມືອງສີສັດຕະນາກ ຊຶ່ງປະຊາຊົນໄດ້ຮັບຄວາມເດືອດຮ້ອນ. ຍ້ອນການຖົມດິນ, ການລ້ຽງງົວ ແລະ ການເຮັດທຸລະກິດຈອດເຫລັກ ແລະ ພົ່ນສີ. ເຂດທີສອງຢູ່ບ້ານດອນແດງ, ເມືອງຈັນທະບູລີ ທີ່ມີຜູ້ປະກອບການເຮັດອູ່ສ້ອມແປງລົດຍົນ. ເຂດທີສາມ ຢູ່ບ້ານຫ້ວຍຫົງ, ເມືອງຈັນ ທະບູລີເຊັ່ນດຽວກັນ.

## 2. ບັນຫາທີ່ເກີດຂຶ້ນ.

ໃນອະດີດເຂດ ດົງປ່າລານທົ່ງເຕັມໄປດ້ວຍທົ່ງນາຫລຽວໄປທາງໃດກໍມີແຕ່ກົກເຂົ້າຂຽວອຸ່ມທຸ່ມພ້ອມກັນນັ້ນກໍໄດ້ຍິນສຽງໄກ່ຂັນດັງຂຶ້ນເປັນບາງຄັ້ງບາງຄາວ. ປະຈຸບັນການເວລາໄດ້ປ່ຽນໄປແລ້ວຫລຽວໄປທາງໃດກໍມີແຕ່ຕຶກໃຫຍ່ ແລະ ການກໍ່ສ້າງເຄຫະສະຖານກໍກໍາລັງດໍາເນີນຢູ່ຢ່າງຟົດສະນັ່ນເນືອງນອງ ແມ້ແຕ່ສຽງໄກ່ຂັນກໍບໍ່ໄດ້ຍິນອີກແລ້ວ.

ເຂດທີ່ເປັນບັນຫາຕັ້ງຢູ່ລະຫວ່າງເສັ້ນທາງຕັດໃໝ່ (ລະຫວ່າງບ້ານໂພນໄຊຫາບ້ານໂພນສີນວນ) ແລະ ເສັ້ນທາງຕັດໃໝ່ ຊື່ ບູລີຈັນ ທີ່ມຸ່ງໜ້າໄປຫາບ້ານສະພັງໝໍ້. ປະຊາຊົນທີ່ອາໄສຢູ່ດົງປ່າລານທົ່ງ ດ້ານໃນມີທັງໝົດແປດຄອບຄົວ. ເຮືອນຂອງຊາວບ້ານເຫລົ່ານີ້ຢູ່ໃນລະດັບຕໍ່າ,ບ່ອນທີ່ເຄີຍເປັນທົ່ງນາມາກ່ອນ. ສ່ວນນັກທຸລະກິດທີ່ມາຊື້ດິນຢູ່ເຂດດ້ານນອກຄືຢູ່ລຽບເສັ້ນທາງບູລີຈັນນັ້ນແມ່ນຜູ້ທີ່ມາຢູ່ໃໝ່ຊື່ນາງ ສົມຈິດ ເປັນຄົນຂາຍຄໍາ.

ຫລັງຈາກໄດ້ຊື້ດິນຕອນດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ ນາງສົມຈິດ ໄດ້ຈ້າງລົດເອົາດິນມາຖົມເນື້ອທີ່ຂອງຕົນ, ເພື່ອປຸກເປັນຕຶກໃຫຍ່ (ດັ່ງທີ່ເຫັນຢູ່ໃນຮູບ). ການຖົມດິນຂອງຜູ້ກ່ຽວມີລະດັບໜຶ່ງແມັດ, ສູງກວ່າໜ້າດິນເດີມ. ນອກຈາກນັ້ນ, ຍັງຕັນຮ່ອງນໍ້າໄຫລນໍາອີກ. ລະດູຝົນຜ່ານນີ້ ຄືໃນປີ 2009, ນໍ້າໄດ້ ອັ່ງຂຶ້ນ ແລ້ວຖ້ວມເຮືອນຂອງຊາວບ້ານທີ່ຢູ່ດ້ານໃນ. ລະດັບຂອງນໍ້າສູງເຖິງ 60 ເຊັນ. ນາງ ໜ່ອມ, ເຈົ້າຂອງເຮືອນເລກທີ 261 ໜ່ວຍ 1 ຊຶ່ງແມ່ນຄອບຄົວໜຶ່ງທີ່ອາໄສຢູ່ດົງປ່າລານທົ່ງດ້ານໃນເວົ້າວ່າ "ປີກາຍນີ້ ນໍ້າຖ້ວມໜ້າບ້ານຮອດຫົວເຂົ່າຕ້ອງໃຊ້ຈັກສອງໜ່ວຍດູດນໍ້າອອກ. ຖ້າບໍ່ດັ່ງນັ້ນນໍ້າຊິຖ້ວມພື້ນເຮືອນຊັ້ນ ລຸ່ມ. ພວກນີ້ລ້ວນແຕ່ເປັນເສດຖີໃຈແຄບບໍ່ຍອມໃຫ້ເຮັດຮ່ອງລະບາຍນໍ້າອອກໄປສູ່ທໍ່ລະບາຍນໍ້າໃຫຍ່.ນໍ້າຖ້ວມປີນີ້ບໍ່ຮູ້ຈະເຮັດແນວໃດ:"

ກໍລະນີທີສອງແມ່ນການສົ່ງກິ່ນເໝັນຈາກການລ້ຽງສັດຢູ່ໃນຂອບເຂດບ້ານ. ທ້າວ ທອງໄບ (ຊື່ສົມມຸດ), ຊາວບ້ານ ໂພນສີນວນ ເຮັດຄອກງົວຢູ່ຕິດຮົ້ວຂອງນາງ ທອງສູນ ເຮືອນເລກທີ 260. ແຕ່ກ່ອນຜູ້ກ່ຽວມີງົວພຽງແຕ່ສອງສາມໂຕ. ປັດຈຸບັນນີ້, ງົວເຫລົ່ານີ້ໄດ້ອອກແມ່ແຜ່ລູກຮອດສິບໂຕແລ້ວ ແລະ ໃນເດືອນໜ້າປີນີ້ມີຫ້າແມ່





ກຳລັງຈະອອກລູກອີກ. ທ້າວ ທອງໄບ ລ້ຽງງົວ ໂດຍມີຈຸດປະສົງວ່າ ມື້ໃດ, ມື້ໜຶ່ງລາວຈະຂາຍຍົກງົວຈຳນວນນີ້ ເພື່ອເອົາເງິນກ້ອນໜຶ່ງມາປຸກເຮືອນໃຫ້ແມ່. ແຕ່ວິທີການລ້ຽງງົວຂອງລາວຂາດຫລັກອະນາໄມ ຄື ບໍ່ໄດ້ທຳຄວາມສະອາດຂີ້ງົວແລ້ວເຮັດໃຫ້ຂີ້ງົວໄຫລລົງຮ່ອງນ້ຳແຄມເຮືອນເປັນຈຳນວນຫລວງຫລາຍຈົນສົ່ງກິ່ນເໝັນລົບກວນຄົນຂ້າງບ້ານ (ໃຫ້ເບິ່ງຢູ່ໃນຮູບ). ນາງ ທອງສູນຊຶ່ງເປັນຜູ້ອາໄສຢູ່ໃກ້ຄຽງຈົ່ມວ່າ “ ກິ່ນເໝັນຫລາຍທົນບໍ່ໄດ້ ຈຳເປັນຕ້ອງໄດ້ໃຊ້ໃບພັດ 3 ໜ່ວຍເພື່ອເປົ່າກິ່ນເໝັນອອກໄປທາງອື່ນ. ໜ່ວຍໜຶ່ງເອົາຕັ້ງໄວ້ກ້ອງຕົ້ນໄມ້ກາງບ້ານໜ່ວຍທີສອງເອົາໄວ້ປາກປະຕູເຂົ້າເຮືອນ, ສ່ວນໜ່ວຍທີສາມເອົາໄວ້ເຮືອນ ຄົວແຕ່ກໍຍັງມີກິ່ນເໝັນຢູ່” ແຕ່ເຈົ້າຂອງງົວກໍຍັງເມີນເສີຍກັບບັນຫາດັ່ງກ່າວ.

ກໍລະນີທີສາມແມ່ນການສ້າງສິ່ງລົບກວນແກ່ຜູ້ອາໄສໃກ້ຄຽງຈາກກິດຈະການເຄາະຈອດ ແລະ ພົ່ນສີຊຶ່ງບໍ່ມີວິທີການທີ່ຖືກຕ້ອງເຮັດຕາມອຳເພີໃຈ. ເຈົ້າຂອງກິດຈະການແມ່ນ ທ້າວ ກ້າ (ນາມ ສົມມຸດ) ຢູ່ບ້ານດົງປ່າລານທົ່ງໜ່ວຍ 14 . ທ້າວ ກ້າ ໄດ້ຕັ້ງອູ່ຈອດປະຕູເຫລັກ, ເຫລັກກັນຂະໂມຍຕິດໃສ່ປ່ອງຢ້ຽມ ແລະ ໂລຫະອື່ນໆ. ຫລັງຈາກຈອດອຸປະກອນຕ່າງໆເຫລົ່ານີ້ແລ້ວ, ກຳມະກອນຕ້ອງໄດ້ພົ່ນສີໃສ່ຕາມຄວາມຕ້ອງການຂອງລູກຄ້າ.

ບັນຫາມີຢູ່ວ່າການເຄາະຈອດໂລຫະນັ້ນ, ທຳໃຫ້ເກີດສຽງດັງຈົນບາດແກ້ວຫູຊາວບ້ານທີ່ຢູ່ໃກ້ຄຽງໂດຍສະເພາະແມ່ນເຮືອນຕຶກຫ້ອງເຊົ່າສາມຊັ້ນ ຊຶ່ງຜູ້ເຊົ່າສ່ວນໃຫຍ່ແມ່ນຄົນຕ່າງປະເທດ. ນອກຈາກນີ້ແລ້ວນ້ຳສີເຄືອບເຫລັກກໍສົ່ງກິ່ນຂິວກຸ້ມຂຶ້ນໄປເຖິງຜູ້ທີ່ອາໄສຢູ່ຊັ້ນສາມພຸ້ນ. ແຂກທີ່ມາ ພັກເຊົ່າຫ້ອງໄດ້ຂໍໃຫ້ທ້າວ ຕິບ ຊຶ່ງເປັນເຈົ້າຂອງເຮືອນຫາວິທີແກ້ໄຂແບ່ງເບົາບັນຫາເຫລົ່ານີ້ໃຫ້ແກ່ພວກເຂົາເຈົ້າ, ແຕ່ມາຮອດປັດຈຸບັນນີ້ສະພາບການກໍຍັງເປັນຄືເກົ່າຢູ່.

ບ້ານດອນແດງກໍແມ່ນເຂດໜຶ່ງທີ່ມີຜູ້ຄົນຍົກຍ້າຍເຂົ້າມາຢູ່ນັບມື້ຫລາຍຂຶ້ນເລື້ອຍໆ.ປັດຈຸບັນຢູ່ທ້ອງຖະໜົນນະຄອນຫລວງວຽງຈັນແອອັດດ້ວຍລົດຍົນຍີ່ຫໍ້ປະເພດຕ່າງໆ.ສະນັ້ນຈຶ່ງບໍ່ເປັນເລື່ອງແປກ ທີ່ມີຜູ້ສົນໃຈເຮັດທຸລະກິດດ້ານການສ້ອມແປງລົດຍົນ. ທ້າວ ບຸນມາ ໄດ້ຕັ້ງອູ່ສ້ອມລົດຢູ່ບ້ານດອນ ແດງ ໜ່ວຍ19 ມາຕັ້ງແຕ່ປີ 2000. ນັບຕັ້ງແຕ່ນັ້ນ,ມາຈຳນວນລູກຄ້າທີ່ເຂົ້າມາໃຊ້ບໍລິການກໍເພີ່ມ ຂຶ້ນ ຕາມລຳດັບ ແລະ ຜູ້ເປັນເຈົ້າຂອງກໍມີລາຍໄດ້ງົດງາມ.ແຕ່ວ່າກິດຈະການນີ້ສົ່ງຜົນກະທົບແກ່ຜູ້ອາໄສຢູ່ຂ້າງຄຽງໂດຍສະເພາະແມ່ນສຽງເນືອງນັນຈາກການເຄາະຈອດເປັນປະຈຳ. ເຈົ້າຂອງອູ່ໄດ້ໃຫ້ກຳມະກອນເຮັດວຽກຕັ້ງແຕ່ 6:00ໂມງເຊົ້າເຖິງ 11:00ໂມງກາງຄືນ. ຊາວບ້ານທີ່ຢູ່ໃກ້ຄຽງພາກັນຈົ່ມວ່າ ບໍ່ສາມາດພັກຜ່ອນໄດ້ເລີຍ.

ກໍລະນີສຸດທ້າຍແມ່ນຜົນກະທົບຈາກນ້ຳເປື້ອນທີ່ອອກມາຈາກສະຖານທີ່ລ້າງລົດເກັງ ແລະ ລົດຈັກ. ຜູ້ປະກອບການແມ່ນ ທ້າວ ສົມດີ (ນາມສົມມຸດ) ຢູ່ໜ່ວຍ 59 ບ້ານຫ້ວຍຫົງ, ເມືອງຈັນທະບູລີ.

ຜູ້ກ່ຽວເຮັດທຸລະກິດບໍລິການລ້າງລົດ,ແຕ່ການໃຊ້ນ້ຳລ້າງລົດນັ້ນຟົ້ງໄສ່ຝາເຮືອນໃກ້ຄຽງຈົນເປິະເປື້ອນ. ເຈົ້າຂອງເຮືອນໄດ້ປິດປ່ອງຢ້ຽມດ້ວຍການກໍ່ຝາຕັນໄວ້. ຄວາມຈິງແລ້ວນາງ ປານີ ຜູ້ໄດ້ຮັບຜົນກະທົບເປັນພີ່ນ້ອງກັບທ້າວ ສົມດີ ສະນັ້ນ, ນາງຈຶ່ງບໍ່ກ້າເວົ້າຫຍັງຫລາຍ ໄດ້ແຕ່ເກັບເອົາຄວາມໜັກອົກໜັກໃຈໄວ້ກັບຕົນເອງ.

## 3 ລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາທີ 1 ໜ້າທີ່ຂອງກົດໝາຍວ່າດ້ວຍຜັງເມືອງ:

ກົດໝາຍວ່າດ້ວຍຜັງເມືອງກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ການນຳໃຊ້ທີ່ດິນ, ການກໍ່ສ້າງ ແລະ ການປຸກສ້າງໃນຂອບເຂດທົ່ວປະເທດ ແລະລະດັບທ້ອງຖິ່ນ ໃຫ້ຖືກຕ້ອງຕາມນະໂຍບາຍ ແລະ ກົດໝາຍ. ແນໃສ່ພັດທະນາຕົວເມືອງໃຫ້ໄປຕາມທິດທາງຂອງແຜນການພັດທະນາເສດຖະກິດ-ສັງຄົມ, ຮັບປະກັນທຸກການເຄື່ອນໄຫວຂອງສັງຄົມໃນຕົວເມືອງໃຫ້ມີຄວາມສະຫງົບ, ຄວາມປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ມີສຸຂະນາໄມ, ມີຄວາມສີວິໄລ, ຮັກສາ ບູຮານສະຖານ, ສະຖາປັດຕະຍະກຳຂອງພື້ນຖານວັດທະນະທຳ ທັງຮັກສາສິ່ງແວດລ້ອມ ແລະ ທິວ ທັດທຳມະຊາດ.

ມາດຕາທີ 4 ຫລັກການຂອງການວາງຜັງເມືອງ.

ການວາງຜັງເມືອງຕ້ອງວາງເປັນລະບົບ ແລະ ມີການປະສານສົມທົບຢ່າງກົມກຽວກັນລະຫວ່າງຂະແໜງການທີ່ກ່ຽວຂ້ອງ, ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນ.

ການວາງຜັງເມືອງຕ້ອງໃຫ້ແທດເໝາະກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງ ແຕ່ລະບໍລິເວນ, ຮັບປະກັນຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບ ຮຽບຮ້ອຍ, ມີສຸຂາ ນາໄມ, ຄວາມສະດວກ, ຄວາມສະອາດ, ຄວາມສວຍງາມ ແລະ ມູນເຊື້ອ ວັດທະນະທຳຂອງ ບັນດາ ເຜົ່າ, ຂອງຊາດ ແລະ ສິ່ງແວດລ້ອມ.

ຜັງເມືອງລະດັບຕົວເມືອງ ຕ້ອງສອດຄ່ອງກັບຜັງເມືອງລະດັບແຂວງ, ຜັງເມືອງລະດັບແຂວງຕ້ອງ ສອດຄ່ອງກັບຜັງເມືອງລະດັບພາກ ແລະ ຜັງເມືອງລະດັບພາກຕ້ອງສອດຄ່ອງກັບຜັງເມືອງລະດັບຊາດ.

ມາດຕາທີ 5 ພັນທະໃນການປະຕິບັດຜັງເມືອງ.

ບຸກຄົນ ແລະ ການຈັດຕັ້ງນັບທັງພາຍໃນ ແລະ ຕ່າງປະເທດທີ່ຢູ່ ສ.ປ.ປ ລາວ ລ້ວນ ແຕ່ມີພັນທະ ໃນການປະຕິບັດຜັງເມືອງທີ່ວາງອອກຢ່າງເຂັ້ມງວດ.

ມາດຕາທີ 27 ການອະນຸຍາດປຸກສ້າງ ຫລືສ້ອມແປງໃຫຍ່

ການອອກໃບອະນຸຍາດປຸກສ້າງ ຫລື ສ້ອມແປງໃຫຍ່ແມ່ນອອກໃຫ້ທຸກກິດຈະການທີ່ຂໍອະນຸຍາດປຸກສ້າງ ຫລືສ້ອມແປງໃຫຍ່ ຊຶ່ງຖືກຕ້ອງກັບລະບຽບຜັງເມືອງເຊັ່ນ:

- ການປຸກສ້າງ.
- ການສ້ອມແປງອາຄານ (ການປ່ຽນແປງ, ການທັບມ້າງທັງໝົດ ຫລື ບາງສ່ວນ).
- ການຂຸດດິນ ຫລື ການຖົມດິນ.
- ການຕິດຕັ້ງເສົາໄຟຟ້າ, ເສົາໂທລະສັບ, ເສົາອາກາດຂະໜາດໃຫຍ່, ອ່າງເກັບນ້ຳສູງ, ຂົວຂ້າມທາງ ແລະ ອື່ນໆ ທີ່ຖືກຕ້ອງຕາມລະບຽບການຂອງຜັງເມືອງວາງອອກ.

ມາດຕາທີ 41 ລະບຽບການນຳໃຊ້ທີ່ດິນປຸກສ້າງ.

ລັດຕ້ອງສະຫງວນທີ່ດິນປຸກສ້າງສຳລັບສາທາລະນະປະໂຫຍດໄວ້, ເພື່ອຮັບໃຊ້ຜົນປະໂຫຍດສ່ວນລວມ.ຖ້າຫາກມີການປ່ຽນເປົ້າໝາຍການໃຊ້ທີ່ດິນດັ່ງກ່າວກໍຕ້ອງໃຫ້ຮັບໃຊ້ຜົນປະໂຫຍດສ່ວນລວມເຊັ່ນດຽວກັນ ແລະ ຕ້ອງໄດ້ຮັບການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ.

ການນຳໃຊ້ທີ່ດິນປຸກສ້າງແມ່ນບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດຂອງຜູ້ອື່ນ,ທັງຮັບປະກັນສະພາວະຄວາມເປັນຈິງຕ້ອງຍອມຮັບ.ການປຸກສ້າງຕ່າງໆຕ້ອງໄດ້ຮັບອະນຸຍາດຈາກອົງການຜັງເມືອງ, ຕ້ອງປະຕິບັດຕາມລະບຽບຜັງເມືອງຢ່າງເຂັ້ມງວດ ແລະ ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງ,ຮັບປະກັນມາດຕະຖານເຕັກນິກຢ່າງຄົບຖ້ວນ,ພ້ອມທັງຮັບປະກັນການປົກປັກຮັກສາສິ່ງແວດລ້ອມ.

## 4. ການວິເຄາະບັນຫາ ແລະ ສິ່ງທີ່ເກີດຂຶ້ນ.

ການຖົມດິນຂອງນາງສົມຈິດຢູ່ບ້ານດົງປ່າລານທົ່ງບໍ່ເປັນໄປຕາມກົດລະບຽບຂອງຜັງເມືອງວາງອອກ ຊຶ່ງມັນສະແດງອອກຢູ່ບ່ອນວ່າຖົມດິນສູງກວ່າໜ້າທາງ ແລະ ສູງກວ່າຕອນດິນໃກ້ຄຽງ. ບັນຫາດັ່ງກ່າວແມ່ນຈະເຮັດໃຫ້ນ້ຳຝົນໄຫລລົງໃສ່ຕອນດິນທີ່ຕ່ຳກວ່າກໍຄືດິນປະຊາຊົນທີ່ອາໄສຢູ່ບໍລິເວນນັ້ນ.ນອກນັ້ນລາວຍັງຖົມດິນຕັນທາງນ້ຳໄຫລອອກຈາກບໍລິເວນນັ້ນອີກ,ນ້ຳບໍ່ສາມາດໄຫລລົງສູ່ຮ່ອງລະບາຍນ້ຳໄດ້ຈຶ່ງອັ່ງຖ້ວມດິນເຮືອນ ແລະ ຊັບສິນຂອງປະຊາຊົນບໍລິເວນນັ້ນເສຍຫາຍ. ເວລາຝົນຕົກລົງມາຍາມໃດເຮັດໃຫ້ມີຄວາມເດືອດຮ້ອນ. ແຕ່ບັນຫາດັ່ງກ່າວຍັງບໍ່ທັນມີການແກ້ໄຂ ແຕ່ຢ່າງ ໃດເລີຍ.

ທ້າວ ທອງໄບ ລ້ຽງງົວຢູ່ໃນຕົວເມືອງກໍຄືຊຸມຊົນສ່ວນໜຶ່ງຂອງ ບ້ານດົງປ່າລານທົ່ງ. ຕາມລະບຽບແລ້ວໃນຕົວເມືອງຕ້ອງມີຄວາມສະອາດ ແລະ ຖືກຫລັກອານາໄມ, ບໍ່ໃຫ້ມີສັດລ້ຽງຢູ່ໃນຕົວເມືອງ. ຖ້າຢາກລ້ຽງແມ່ນຕ້ອງລ້ຽງຢູ່ເຂດນອກ ຫລື ຕ້ອງມີຟາມລ້ຽງສະເພາະ. ການລ້ຽງງົວ ຂອງຜູ້ກ່ຽວໄດ້ສົ່ງຜົນກະທົບຕໍ່ນາງ ທອງສູນ ຢູ່ບ່ອນວ່າ ສິ່ງກິ່ນເໝັນລົບກວນ. ຜູ້ກ່ຽວຄວນຫາວິທີກຳຈັດກິ່ນເໝັນດ້ວຍການເອົາ EM ມາໃສ່ບ່ອນເກັບມ້ຽນຂີ້ງົວ ແລະ ລ້າງທຳຄວາມສະອາດ ພື້ນຢູ່ເລື້ອຍໆ. ຖ້າຈຳນວນງົວເພີ່ມຂຶ້ນຫລາຍກວ່ານີ້ກໍຕ້ອງຊອກຫາສະຖານທີ່ເໝາະສົມຢູ່ນອກເມືອງເປັນບ່ອນລ້ຽງ.

ມີຄວາມຈຳເປັນຢ່າງຍິ່ງທີ່ອົງການສິ່ງແວດລ້ອມ, ອົງການພັດທະນາ ແລະ ບໍລິຫານຕົວເມືອງຄວນລົງ ມາຕັກເຕືອນ ແລະ ແນະນຳທາງອອກ. ຖ້າບໍ່ດັ່ງນັ້ນ, ອາດຈະເກີດໂລກລະບາດເປັນຜົນກະທົບຮ້າຍແຮງຕໍ່ສະພາບແວດລ້ອມ.

ກິດຈະຈະການບໍລິການຂອງ ທ້າວ ກ້າ ຢູ່ບ້ານດົງປ່າລານທົ່ງ ແລະ ທ້າວ ບຸນມາ ຢູ່ບ້ານ ດອນແດງຊຶ່ງມີຜົນກະທົບທາງດ້ານສຽງເມືອງນັນ, ສານລະເຫີຍຈາກສີ ແລະ ອື່ນໆທີ່ລົບກວນການພັກຜ່ອນ ແລະທຳລາຍສຸຂະພາບຂອງຜູ້ອາໄສຢູ່ໃກ້ຄຽງ. ດັ່ງນັ້ນ, ຂະແໜງການທີ່ກ່ຽວຂ້ອງຄື ຜັງເມືອງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບ) ຄວນລົງສຳຫລວດກວດກາຄືນ. ຖ້າບັນຫາດັ່ງກ່າວຫາກບໍ່ໄດ້ຮັບ ການແກ້ໄຂກໍອາດຈະເກີດ ການຜິດຂ້ອງຕ້ອງຖຽງກັນໃນຕໍ່ໜ້າ ນຳໄປສູ່ຄວາມແຕກແຍກຄວາມສາມັກຄີໃນບ້ານ.

ບັນຫາສຸດທ້າຍກ່ຽວກັບກິດຈະການບໍລິການລ້າງລົດເກີດຈາກຄວາມຜິດໃຫ້ການເຮັດທຸລະກິດ,

ແຕ່ເບື້ອງຕົ້ນທີ່ບໍ່ໄດ້ວິເຄາະເຖິງບັນຫາທີ່ຈະຈະເກີດຂຶ້ນຕາມມາ. ເມື່ອເຫດການເປັນແນວນີ້ຜູ້ປະກອບການຄວນຫາວິທີການແກ້ໄຂບໍ່ໃຫ້ເກີດຜົນຮ້າຍຕໍ່ຜູ້ອື່ນ. ໃນເມື່ອ ນາງປານີ ແລະ ທ້າວ ສົມດີ ເປັນຍາດຕິພີ່ນ້ອງກັນ. ສະນັ້ນ, ທັງສອງຝ່າຍຄວນປຶກສາຫາລືກັນແບບຄອບຄົວ. ເພື່ອຫຼີກລ້ຽງຂໍ້ຂັດແຍ່ງທີ່ຈະຕາມມາ







ພາຍຫລັງ.

## 5. ສະຫຼຸບ.

ພວກເຮົາບໍ່ອາດປະຕິເສດໄດ້ວ່າຢູ່ໃນສັງຄົມໜຶ່ງໆນັ້ນມີປະຊາຊົນທີ່ມີອາຊີບການທຳມາຫາກິນທີ່ແຕກຕ່າງກັນ. ແຕ່ຄົນເຮົາຈະຢູ່ຮ່ວມກັນດ້ວຍຄວາມຜາສຸກໄດ້ນັ້ນ, ທຸກຄົນຕ້ອງເຄົາລົບສິດທິພື້ນຖານຂອງກັນ ແລະ ກັນ. ບັນຫາທີ່ເກີດຈາກການຖົມດິນ, ການລ້ຽງສັດທີ່ບໍ່ເໝາະສົມ, ການເຮັດທຸລະກິດທີ່ສ້າງມົນລະພິດດ້ານສຽງຕະຫລອດຮອດການເຮັດໃຫ້ເກີດນ້ຳເປິະເປື້ອນເປັນສິ່ງທີ່ພວກເຮົາຄວນນຳມາພິຈາລະນາກັນ. ເຖິງເວລາແລ້ວທີ່ຈະຕ້ອງເອົາໃຈໃສ່ສິ່ງເຫລົ່ານີ້ຢ່າງຈິງຈັງ,ແທນທີ່ຈະປ່ອຍໃຫ້ບັນຫາບານປາຍແລ້ວຈຶ່ງຄ່ອຍແກ້ກັນຕາມທີຫລັງ.

ຕົວເມືອງຈະສວຍງາມຖ້າພະນັກງານໃນຂະແໜງການກ່ຽວຂ້ອງຫາກໃຫ້ຂໍ້ມູນຂ່າວສານກ່ຽວກັບລະບຽບກົດໝາຍໃຫ້ເຖິງຖອງທຸກຂົງເຂດ ແລະ ປະຕິບັດໜ້າທີ່ເປັນນັກວິຊາການແບບມີຈັນຍາບັນຂອງອາຊີບ. ຂະແໜງການກວດກາຕ້ອງປະຕິບັດຕາມລະບຽບຢ່າງເຂັ້ມງວດ.

ສັງຄົມຈະມີຄວາມສະຫງົບສຸກ ຖ້າປະຊາຊົນມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນຫລາຍຂຶ້ນໃຫ້ກຽດໃນການຕັດສິນບັນຫາທີ່ດິນຢູ່ໃກ້ຄຽງກັນບົນພື້ນຖານລະບຽບກົດໝາຍ ແລະ ນ້ຳໃຈມະນຸດສະທຳ, ທ້າຍທີ່ສຸດສະພາບແວດລ້ອມຕົວເມືອງກໍຈະດີຂຶ້ນ. ເຮັດໃຫ້ຊຸມຊົນເປັນທີ່ດຶງດູດໃຈຜູ້ທີ່ເດີນທາງຜ່ານໄປມາ ແລະ ເປັນທີ່ສັນລະເສີນຂອງທຸກຄົນ.

## 6. ຂໍ້ສະເໜີ.

- ຄວນໃຫ້ພະນັກງານທີ່ກ່ຽວຂ້ອງລົງກວດກາການນຳໃຊ້ດິນຕິດແປະກັນມີສິ່ງອຳນວຍຄວາມສະດວກ, ໄລຍະຫ່າງຂອງອາຄານຈາກຊາຍແດນຕິດແປະຕາມມາດຕະຖານ, ແຕ່ຕ້ອງເຮັດວຽກເປັນຕາມນັກວິຊາການ.
- ໜ່ວຍງານບ້ານເມືອງຄວນເຂັ້ມງວດໃນການກວດກາລະບົບຕ່າງໆຂອງສິ່ງອຳນວຍຄວາມສະດວກ.
- ປະຊາຊົນຄວນຕື່ນຕົວໃນການທີ່ຈະສ້າງສິ່ງໃດໜຶ່ງພາຍໃນຕອນດິນຂອງຕົນ. ຄວນປຶກສາຄົນບ້ານໃກ້ເຮືອນຄຽງ, ປຶກສາກັບຂະແໜງການທີ່ກ່ຽວຂ້ອງເປັນຢ່າງດີ. ກ່ອນຈະລົງມືປະຕິບັດຕົວຈິງ ເພື່ອບໍ່ໃຫ້ເກີດບັນຫາຕາມມາຫລາຍຢ່າງ.
- ຄົນຢູ່ບ້ານໃກ້ເຮືອນຄຽງຂອງ ທ່ານ ອາດ ຜິດໃຈທ່ານແຕ່ບໍ່ກ້າເອີ່ຍ, ຍ້ອນເຂົາເຈົ້າໄດ້ຮັບຜົນກະທົບຈາກການກະທຳຂອງທ່ານ.
- ປະຊາຊົນບໍ່ຄວນເຫັນແກ່ຜົນປະໂຫຍດຂອງຕົນເອງຫລາຍເກີນໄປ.
- ພະນັກງານທີ່ມີສ່ວນກ່ຽວຂ້ອງຄວນເອົາໃຈໃສ່ໃນການເຜີຍແຜ່ຂໍ້ມູນຂ່າວສານໃຫ້ທົ່ວເຖິງ.
- ການກວດກາຂອງພະນັກງານຄວນເຂັ້ມງວດຫລາຍຂຶ້ນ.

- ອຳນາດການປົກຄອງບ້ານຄວນເອົາໃຈໃສ່ຕໍ່ບັນຫາຕ່າງໆທີ່ອາດເປັນການທຳລາຍສະພາບແວດລ້ອມໃນຕົວເມືອງໄຮ້ຄວາມສວຍງາມ.
- ຄຳຖາມ.

1. ຖ້າຫາກວ່າ ທຸກທ່ານບໍ່ປະຕິບັດຕາມລະບຽບຂອງການຖືມດິນທີ່ວາງອອກຊຸມຊົນຈະເກີດຫຍັງຂຶ້ນໃນຕໍ່ໜ້າ?
2. ການລ້ຽງງົວຢູ່ໃນຕົວເມືອງມີຜົນດີແນວໃດ?
3. ພວກທ່ານມີວິທີການແນວໃດເພື່ອບໍ່ໃຫ້ກິດຈະການຂອງທ່ານເກີດມີສຽງລົບກວນຄົນອື່ນທີ່ຢູ່ໃກ້ຄຽງ?
4. ກ່ອນທີ່ທ່ານຈະສ້າງກິດຈະການໃດໜຶ່ງຂຶ້ນມາທ່ານຄວນຄຳນຶງເຖິງສິ່ງໃດແດ່?

## ຂໍ້ສັງເກດ:

- ພາກບົດນຳ: ຄິດວ່າໃຫ້ເວົ້າກ່ຽວກັບນະໂຍບາຍລະບຽບຫຼັກການ ແລະ ກົດໝາຍຕ່າງໆທີ່ພົວພັນກັບເລື້ອງດັ່ງກ່າວໂດຍສັງເຂບ ເຊັ່ນ: ກົດໝາຍເລື່ອງທີ່ດິນ, ກົດໝາຍການດຳເນີນທຸລະກິດໂດຍສະເພາະທຸລະກິດບໍລິການຕ່າງໆ, ກົດໝາຍ ຫຼື ລະບຽບການປຸກສ້າງ ແລະ ອື່ນໆ ເພື່ອໃຫ້ຜູ້ອ່ານໄດ້ເຂົ້າໃຈວ່າ ບ້ານເຮົາໄດ້ມີລະບຽບການຄຸ້ມຄອງແລ້ວ, ຖ້າຜູ້ໃດຝ່າຝືນກໍໝາຍຄວາມວ່າ ມີການຂັດແຍ່ງ. ນອກຈາກນັ້ນ, ຢາກຈະໃຫ້ເວົ້າກ່ຽວກັບຮີດຄອງປະເພນີການດຳລົງຊີວິດຢູ່ຮ່ວມກັນຂອງຄົນລາວເຮົາເປັນຄືແນວໃດ ສົມທຽບປັດຈຸບັນກັບເມື່ອກ່ອນ (ຖ້າເປັນໄປໄດ້).
- ສ່ວນພາກອະທິບາຍເຖິງທີ່ຕັ້ງ: ຢາກໃຫ້ອະທິບາຍ ແລະ ເວົ້າມາທັງໝົດວ່າ ທີ່ຕັ້ງຂອງດິນເປັນຄືແນວໃດ, ສິ່ງປຸກສ້າງອ້ອມຂ້າງເດມີອັນໃດແດ່, ເພາະວ່າ ໄດ້ແລ້ວເຫັນວ່າ ໄດ້ເວົ້າໄປເຖິງຮອດໂຮງຮຽນ ....
- ສ່ວນພາກທີ່ຂຽນກ່ຽວກັບລະບຽບກົດໝາຍ. ໃຫ້ສັງເຂບເຂົ້າຢູ່ໃນພາກສະເໜີ ຫຼື ເປີດຫົວເລື້ອງເລີຍ.

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

## *ເປົ້າໝາຍຂອງໂຄງການ*

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

## *ຈຸດປະສົງຂອງໂຄງການ*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລືກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ໂຄງການດຳເນີນງານໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້*

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທຳມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີເມວ: info@rightslinklao.org
www.rightslinklao.org